ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງຫຼວງນ້ຳທາ

ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ.....13...../ພຊສ

ຫຼວງນ້ຳທາ, ວັນທີ ....18.03.2014

# ໃບຢັ້ງຢືນດ້ານສິ່ງແວດລ້ອມ

- ອີງຕາມ: ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ, ສະບັບເລກທີ 29/ສພຊ, ວັນທີ 18/12/2012.
- ອີງຕາມ: ຄຳແນະນຳຂະບວນການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ສະບັບເລກທີ 8029/ກຊສ, ລົງວັນທີ 17/12/2013.

**ຫົວໜ້າ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ**

**ປະທານຄະນະກຳມະການສິ່ງແວດລ້ອມ ແຂວງຫຼວງນ້ຳທາ ຕົກລົງເຫັນດີ**

1. ຮັບຮອງເອົາບົດລາຍງານການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການ ຊົນລະປະທານ ນ້ຳຍາງ ບ້ານນ້ຳແງ້ນ, ເມືອງຫຼວງນ້ຳທາ, ສະບັບເດືອນ ມີນາ ປີ 2014 ຂອງ ພະແນກກະສິກຳ ແລະ ປ່າໄມ້ແຂວງຫຼວງນ້ຳທາ ໂດຍໃຫ້ຜູ້ພັດທະນາໂຄງການ ປະຕິບັດຕາມເງື່ອນໄຂ ແລະ ພັນທະທີ່ລະບຸໄວ້ ດ້ານຫລັງ ຂອງໃບຢັ້ງຢືນ ສະບັບນີ້.
2. ມອບໃຫ້ ພະແນກ ແລະ ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງຫຼວງນ້ຳທາ ສົມທົບກັບຫ້ອງການທີ່ກ່ຽວຂ້ອງ ເຮັດໜ້າທີ່ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມາດຕະການປ້ອງກັນ ແລະ ຫຼຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການ ຊົນລະປະທານ ນ້ຳຍາງ.

ໃບຢັ້ງຢືນສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

**ປະທານຄະນະກຳມະການສິ່ງແວດລ້ອມ ແຂວງຫຼວງນ້ຳທາ**

**ຮສຈ.ດຣ.ຄຳເຫຼັກ ໄຊດາລາ**

ສຳເນົານຳສົ່ງ:

| | | |
|---|---|---|
| 1. | ພະແນກ ຊສ | 1 ສະບັບ |
| 2. | ຫ້ອງການ ຊສ ເມືອງ | 1 ສະບັບ |
| 3. | ໂຄງການ | 1 ສະບັບ |
| 4. | ສຳເນົາ | 1 ສະບັບ |